# ທຄຕລ ອອກຈຳໜ່າຍຮຸ້ນສາມັນເພີ່ມທຶນ (RO/PO) ເພື່ອເປີດໂອກາດໃຫ້ນັກລົງທຶນເດີມ ແລະ ໃໝ່ ຮ່ວມເປັນເຈົ້າຂອງ ທຄຕລ




## ໃນຕອນເຊົ້າ ວັນສຸກ ວັນທີ 19 ກັນຍາ 2025

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຮ່ວມກັບ ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ (ບລຈ) ຈັດງານນຳສະເໜີຂໍ້ມູນການອອກຈຳໜ່າຍຮຸ້ນ ໃຫ້ແກ່ຜູ້ຖືຮຸ້ນເດີມ (Right Offering - RO) ແລະ ມວນຊົນທົ່ວໄປ (Public Offering - PO) ເພື່ອສະເໜີຂາຍໃຫ້ນັກລົງທຶນ ທັງພາຍໃນ ແລະ ຕ່າງປະເທດ.



ງານດັ່ງກ່າວໄດ້ຈັດຂຶ້ນ ຢູ່ທີ່ ໂຮງແຮມ ສຸພັດຕຣາ ນະຄອນຫຼວງວຽງຈັນ ເຊິ່ງໃຫ້ກຽດເຂົ້າຮ່ວມງານໃນຄັ້ງນີ້ມີ **ທ່ານ ສຸລິວັດ ສຸວັນນະຈູມຄຳ, ຮອງລັດຖະມົນຕີ ກະຊວງການເງິນ - ປະທານສະພາບໍລິຫານ ທຄຕລ, ທ່ານ ອາລຸນ ບຸນຍົງ ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ** ພ້ອມດ້ວຍຜູ້ຕາງໜ້າຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ, ສະມາຊິກສະພາບໍລິຫານ ທຄຕລ, ບັນດາບໍລິສັດຫຼັກຊັບ, ຜູ້ຖືຮຸ້ນ ທຄຕລ, ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ຕະຫຼອດເຖິງ ບັນດາລູກຄ້າຂອງ ທຄຕລ, ພ້ອມດ້ວຍສື່ມວນຊົນຈາກຫຼາຍພາກສ່ວນ ເຂົ້າຮ່ວມຢ່າງພ້ອມພຽງ.






**ທ່ານ ນ. ສາຍສະໜອນ ຈັນທະຈັກ ຜູ້ອຳນວຍການ ທຄຕລ** ໄດ້ຂຶ້ນກ່າວຈຸດປະສົງຂອງການຈັດງານດັ່ງກ່າວ ເຊິ່ງການອອກຈຳໜ່າຍຮຸ້ນເພີ່ມທຶນ (RO/PO) ຂອງ ທຄຕລ ໃນຄັ້ງນີ້ ຖືເປັນການເປີດໂອກາດໃຫ້ແກ່ ຜູ້ຖືຮຸ້ນເດີມ ສາມາດຈອງຊື້ຮຸ້ນຕາມອັດຕາສ່ວນທີ່ກຳນົດ ແລະ ຖືເປັນການຮັກສາສິດຂອງນັກລົງທຶນເດີມ ພ້ອມທັງເປັນການເປີດໂອກາດໃຫ້ແກ່ ບັນດາມວນຊົນທົ່ວໄປ, ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ໃຫ້ເຂົ້າມາມີສ່ວນຮ່ວມໃນການເປັນເຈົ້າຂອງ ທຄຕລ ຮ່ວມກັນ.

ນອກຈາກນັ້ນ, **ທ່ານ ນາລິນ ສີລະວົງສິດ ຮອງຜູ້ອຳນວຍການ ທຄຕລ** ຍັງໄດ້ນຳສະເໜີປະຫວັດຄວາມເປັນມາ ແລະ ພາບລວມການດຳເນີນທຸລະກິດຂອງ ທຄຕລ ແລະ ທິດທາງແຜນການໃນຕໍ່ໜ້າ ແລະ **ທ່ານ ພົງສະຫວັດ ລືນາມ, ຮອງຜູ້ອຳນວຍການ ບລຈ** ໄດ້ນຳສະເໜີຂໍ້ມູນຕົວເລກຖານະການເງິນທີ່ພົ້ນເດັ່ນຂອງ ທຄຕລ ແລະ ຕົວຊີ້ວັດດ້ານການເງິນເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ລົງທຶນ ໃນການຈັບຈອງຊື້ຮຸ້ນຂອງ ທຄຕລ.






ທຄຕລ ໄດ້ສະເໜີອອກຈຳໜ່າຍຮຸ້ນເພີ່ມທຶນທັງໝົດ ຈຳນວນ **506,255,500 ຮຸ້ນ** ແລະ ມີມູນຄ່າກຳນົດ **1,000 ກີບ/ຮຸ້ນ,** ສຳລັບລາຄາທີ່ອອກຈຳໜ່າຍ ໃຫ້ແກ່ຜູ້ຖືຮຸ້ນເດີມ ແມ່ນ **1,640 ກີບ/ຮຸ້ນ** ໂດຍໄລຍະການຈອງຊື້ຮຸ້ນສຳລັບຜູ້ຖືຮຸ້ນເດີມ (**RO**) ແມ່ນລະຫວ່າງ ວັນທີ **22 - 26** ກັນຍາ **2025**, ສ່ວນລາຄາທີ່ອອກຈຳໜ່າຍ ໃຫ້ແກ່ມວນຊົນທົ່ວໄປ ແມ່ນ **1,730 ກີບ/ຮຸ້ນ** ໂດຍໄລຍະການຈອງຊື້ຮຸ້ນສຳລັບມວນຊົນທົ່ວໄປ (**PO**) ແມ່ນລະຫວ່າງ ວັນທີ **29** ກັນຍາ **2025 - 03** ຕຸລາ **2025**.

ໂດຍສາມາດຈອງຊື້ໄດ້ທີ່ ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ, ບໍລິສັດ ຫຼັກຊັບ BCEL-KT ຈຳກັດ, ບໍລິສັດ ຫຼັກຊັບ LDB ຈຳກັດຜູ້ດຽວ, ສຳນັກງານໃຫ່ຍ ທຄຕລ ແລະ ບັນດາສາຂາ ທຄຕລ ທົ່ວປະເທດ. ການອອກຮຸ້ນເພີ່ມທຶນ ຄັ້ງນີ້ ບໍ່ພຽງແຕ່ເປັນຜົນດີຕໍ່ ທຄຕລ ເທົ່ານັ້ນ, ແຕ່ຍັງເປັນໂອກາດທອງ ສຳລັບນັກລົງທຶນທີ່ຕ້ອງການຮ່ວມລົງທຶນກັບທະນາຄານຊັ້ນນຳຂອງປະເທດ ໂດຍສິ່ງນີ້ສະແດງໃຫ້ເຫັນເຖິງວິໄສທັດຂອງ ທຄຕລ ທີ່ໃຫ້ຄວາມສຳຄັນກັບການພັດທະນາຢ່າງຍືນຍົງ ແລະ ຄວາມໂປ່ງໃສໃນການດຳເນີນທຸລະກິດ.